ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດການແຂ່ງຂັນກິລາຂໍ່ານັບຮັບຕ້ອນ ກອງປະຊຸມໃຫຍ່ຄັ້ງທີ IV ອົງຄະນະພັກ ທຫລ





ຄະນະພັກ-ຄະນະນຳ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງຂະບວນການແຂ່ງຂັນກິລາ ເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IV ຂອງອົງຄະນະພັກ ທຫລ ແລະ ໄດ້ສຳເລັດລົງດ້ວຍບັນຍາກາດເບີກບານມ່ວນຊື່ນ, ລຽບງ່າຍ ແລະ ມີຄວາມໝາຍສຳຄັນ ຊຶ່ງມີການແຂ່ງຂັນກິລາບານເຕະ ໃນວັນທີ 5 ກັນຍາ 2020 ທີ່ເດີ່ນກິລາ ເຈົ້າອະນຸວົງ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ; ບັນດາສະຫາຍຄະນະປະຈຳພັກ-ຮອງຜູ້ວ່າການ ທຫລ; ບັນດາຄະນະກົມ-ຄະນະອຳນວຍການທະນາຄານທຸລະກິດ ແລະ ນັກກິລາ ເຂົ້າຮ່ວມຢ່າງພ້ອມພຽງ.

ການແຂ່ງຂັນກິລາບານເຕະຄູ່ທຳອິດ ແມ່ນທີມຊາຍ ລະຫວ່າງຄະນະກິລາຄະນະພັກ-ຄະນະນຳ ທຫລ ກັບ ຄະນະອຳນວຍການ-ຜູ້ບໍລິຫານທະນາຄານທຸລະກິດໂດຍການເປີດເດີ່ນຂອງຄະນະກິລາ ທຫລ; ຈາກນັ້ນ, ການແຂ່ງຂັນ ກໍ່ໄດ້ດຳເນີນໄປດ້ວຍບັນຍາກາດທີ່ດີຂຶ້ນຕາມລຳດັບ, ທັງຄູ່ເຖິງຈະເປັນທີມອາວຸໂສ ແຕ່ກໍ່ມີລີລາບໍ່ທຳມະດາ ເພາະທຸກຝ່າຍລ້ວນແຕ່ເປັນນັກກິລາມາກ່ອນແລ້ວ, ການແຂ່ງຂັນໄດ້ໄຕ່ເຕົ້າສູ່ອຸນນະພູມທີ່ດີຂຶ້ນທ່າມກາງແສງແດດທີ່ເໝາະສົມ; 2 ທີມ ໄດ້ລາກບານຈາກເດີ່ນຂອງຕົນຂຶ້ນ ເພື່ອເຈາະປະຕູຂອງກັນ ແລະ ກັນ; ແຕ່ໃນນາທີທີ 5 ທ່ານ ຄຳວົງ ທິບພະວົງ ກໍ່ໄດ້ນຳບານຍິງເຂົ້າປະຕູຂອງຄະນະກິລາທະນາຄານທຸລະກິດ ໄດ້ຢ່າງສວຍງາມ ແລະ ພຽງແຕ່ 9 ນາທີກໍ່ສາມາດຍິງເຂົ້າໄດ້ 3 ປະຕູ, ເປັນອັນວ່າການແຂ່ງຂັນກິລາບານເຕະທີມຊາຍລະຫວ່າງຄະນະພັກ-ຄະນະນຳ ທຫລ ກັບ ຄະນະອຳນວຍການ-ຜູ້ບໍລິຫານທະນາຄານທຸລະກິດໃນຄັ້ງນີ້, ທຫລ ຊະນະ 5 ປະຕູຕໍ່ 0, ທ່ານ ຄຳວົງ ທິບພະວົງ ຜູ້ດຽວສາມາດຍິງເຂົ້າປະຕູຂອງທະນາຄານທຸລະກິດ 4 ປະຕູ.

ໃນເວລາຕໍ່ມາ, ກໍ່ເປັນການແຂ່ງຂັນບານເຕະຂອງທີມຍິງ ລະຫວ່າງ ທຫລ ກັບ ທະນາຄານທຸລະກິດ ໂດຍການແຂ່ງຂັນຂອງຄູ່ດັ່ງກ່າວ ເຮັດໃຫ້ຜູ້ຊົມ-ກອງເຊຍ ມີຄວາມປະທັບໃຈຫຼາຍ ຊຶ່ງໄດ້ສົ່ງສຽງເປັນກຳລັງໃຈແກ່ທີມຝ່າຍຕົນເປັນໄລຍະ ແຕ່ຜົນຂອງການແຂ່ງຂັນ ແມ່ນຄະນະກິລາບານເຕະຍິງຂອງທະນາຄານທຸລະກິດສາມາດເອົາຊະນະທີມຍິງ ທຫລ ຢ່າງຫວຸດຫວິດ 1 ຕໍ່ 0 ແລະ ໃນໂອກາດດັ່ງກ່າວ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ ແລະ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ກໍ່ໄດ້ໃຫ້ກຽດມອບຂັນລາງວັນໃຫ້ແກ່ນັກກິລາ ຕາມລຳດັບ.





ຂ່າວແຈ້ງຕື່ມວ່າ: ໃນຕົ້ນເດືອນສິງຫາ 2020 ຄະນະນຳ ທະນາຄານແຫ່ງ ສປປ ລາວ ກໍ່ໄດ້ຈັດຕັ້ງການແຂ່ງຂັນກິລາມວນຊົນ (ກິລາເປຕັງ) ມາກ່ອນແລ້ວ ທີ່ສະໜາມກິລາເປຕັງ (ຊີເກມ) ມະຫາວິທະຍາໄລແຫ່ງຊາດ. ຊຶ່ງການແຂ່ງຂັນຄັ້ງນັ້ນ ມີທີມຄູ່ກິດຕິມະສັກ (ທີມປະສົມ ຊາຍ-ຍິງ) ແຕ່ກຳມະການບອກວ່າ: ເປັນການແຂ່ງຂັນກິລາມິດຕະພາບ, ບໍ່ມີການປະກາດຜົນການແຂ່ງຂັນ; ສຳລັບການແຂ່ງຂັນກິລາເປຕັງທີມທີ່ຊະນະເລີດ ປະເພດຊາຍໄດ້ແກ່ທີມທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ICBC) ແລະ ປະເພດຍິງ ໄດ້ແກ່ສຳນັກງານປົກປ້ອງເງິນຝາກ; ຮອງຊະນະເລີດ ປະເພດຊາຍແມ່ນທະນາຄານຮ່ວມທຸລະກິດ ລາວ-ຫວຽດ ແລະ ປະເພດຍິງແມ່ນ ທຫລ ແລະ ລາງວັນທີ 3 ປະເພດຊາຍ ແມ່ນທະນາຄານນະໂຍບາຍ+ສຳນັກງານປົກປ້ອງເງິນຝາກ ແລະ ປະເພດຍິງແມ່ນທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ+ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.



**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**